ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ
ພະແນກ ກະສິກຳ ແລະ ປ່າໄມ້
ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ອງ

ບົດສະຫລຸບ 1 ປີ

ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດ ນ້ຳມ່ວນ-ນ້ຳຍ້ອງໄລຍະທີ II

ປະຈຳ ສົກປີ 2016 - 2017

ໂດຍ: ພະແນກ ກະສິກຳ ແລະ ປ່າໄມ້ແຂວງ ບໍລິຄຳໄຊ

I. ພາກສະເໜີ

ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ວງໄລຍະທີ2 ແຂວງບໍລິຄຳໄຊ ໄດ້ເຊັນສັນຍາ ແລະ ເລີ່ມເຄື່ອນໄຫວມາແຕ່ວັນທີ 14 ມີນາ 2016 ມື້ສຳເລັດໂຄງການ 14 ມີນາ 2020.

ໂຄງການນີ້ ໄດ້ຮັບທຶນສະໜັບສະໜຸນ ຈາກກອງທຶນປົກປັກຮັກສາສິ່ງແວດລ້ອມ (ກປສ) ຈາກ 50% ຂອງທຶນປະກອບສ່ວນຂອງໂຄງການເຂື່ອນໄຟຟ້າເທີນຫີນພາກະຫຍາຍໃຫ້ ກປສ ໃນມູນຄ່າ 2 ແສນໂດລາຕໍ່ ປີ ມີໄລຍະເວລາ 27 ປີ (ນັບແຕ່ປີ 2013 ເຖິງປີ 2040) ເພື່ອຄຸ້ມຄອງຊີວະນາໆພັນເຂດອ່າງໂຕ່ງນ້ຳຍ້ວງ ເຊິ່ງ ໃນປີ 2013 ເຖິງ ປີ 2015 ແຂວງບໍລິຄຳໄຊ ໄດ້ຮັບທຶນດັ່ງກ່າວ ຈຳນວນ 1,9 ຕື້ກີບ ໂດຍໄດ້ຈັດຕັ້ງປະຕິບັດຢູ່ 9 ບ້ານ ຂອງ 3 ເມືອງ ຄື : ເມືອງໄຊຈຳພອນ (ມີບ້ານນ້ຳອ້ອນ, ບ້ານວັງບານ ແລະ ບ້ານໂພນຄຳ), ເມືອງຄຳ ເກີດ (ມີບ້ານຫຼັກຫ້າ, ບ້ານຫາງນາ ແລະ ບ້ານນາເຮືອງ), ເມືອງວຽງທອງ (ມີບ້ານນາຕັນ, ບ້ານາຍາງ ແລະ ຜາ ບໍ່) ແລະ ໃນໄລຍະທີ 2 ໂຄງການໄດ້ງົບປະມານ 2,796 ຕື້ກີບ ຈະຈັດຕັ້ງປະຕິບັດ 9 ບ້ານ ເມືອງໄຊຈຳພອນ ຄື: ບ້ານໂພນເມືອງ, ບ້ານເມືອງຈຳ, ບ້ານສີບຂອນ, ບ້ານສີບຄີ, ບ້ານນ້ຳສັກ, ບ້ານພຽງດີ, ບ້ານສີບເຕີ່ງ, ບ້ານ ໂພນໝັ້ນ ແລະ ບ້ານນ້ຳປັນ.

ໂຄງການດັ່ງກ່າວ ແນໃສ່ຈັດຕັ້ງການອະນຸລັກປົກປັກຮັກສາຊີວະນາໆພັນ ໂດຍສະເພາະປ່າໄມ້ແລະສັດ ນ້ຳ-ສັດປ່າ ໃນປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ວງ (ເຂດອ່າງໂຕ່ງນ້ຳຍ່ວງ) ພ້ອມທັງຊຸກຍູ້ສົ່ງເສີມການ ພັດທະນາຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ນັບມື້ນັບດີຂຶ້ນ ເພື່ອໃຫ້ເຂົາເຈົ້າຫັນປ່ຽນພຶດຕິກຳ ຈາກການນຳໃຊ້ ຊັບພະຍາກອນທຳມະຊາດແບບບໍ່ຍືນຍົງ ເຂົ້າມາຮ່ວມໃນການປົກປັກຮັກສາຊັບພະຍາກອນໃນປ່າປ້ອງກັນແຫ່ງ ຊາດນ້ຳມ່ວນ-ນ້ຳຍ້ວງ (ເຂດອ່າງໂຕ່ງ ນ້ຳຍ່ວງ).

ປະຈຸບັນ ພະແນກກະສິກຳ ແລະ ປ່າໄມ້ແຂວງບໍລິຄຳໄຊ ໄດ້ເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດ ວຽກງານ ໂດຍສົມທົບແລະມີສ່ວນຮ່ວມ ຈາກພະແນກການ, ຫ້ອງການທີ່ກ່ຽວຂ້ອງຂອງແຂວງແລະເມືອງ ຕາມ ຂັ້ນຕອນແລະຕາມແຜນການ ທີ່ຜູ້ໃຫ້ທຶນໄດ້ວາງໄວ້.

ມາເຖິງເດືອນ11/2017 ນີ້ການໃຊ້ຈ່າຍງົບປະມານໂຄງການມີທັງໝົດ 1,529,134,500 ກີບ ຈາກຈຳ ນວນເງິນທັງໝົດ 2,796 ຕື້ກີບ ເທົ່າກັບ 71% ແລະ ສະເພາະໃນປີ 2017ນີ້ການໃຊ້ຈ່າຍຕາມແຜນປີສາມາດ ປະຕິບັດໄດ້ 114.2%(ເກີນແຜນ).

II. ການປະຕິບັດໂຄງການ

2.1. ຈຸດປະສົງຂອງໂຄງການ

ເພື່ອສ້າງຄວາມອາດສາມາດໃນການຮ່ວມມືແບບມີສ່ວນຮ່ວມ ລະຫວ່າງ ລັດ ກັບ ຊຸມຊົນ ໃນການຄຸ້ມ ຄອງປົກປັກຮັກສາພັດທະນາປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ວງ ພ້ອມທັງປັບປຸງຊີວິດການເປັນຢູ່ປະຊາຊົນ ໃຫ້ນັບມື້ນັບດີຂຶ້ນ.

2.2. ກອບໂຄງການໂດຍຫຍໍ້

I. ສະພາບລວມໂຄງການ

- ຊື່ໂຄງການ: ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດ ເຂດອ່າງໂຕ່ງນ້ຳຍວງ ແຂວງບໍລິຄຳໄຊ
- ອົງການຈັດຕັ້ງ: ພະແນກກະສິກຳ ແລະ ປ່າໄມ້ແຂວງບໍລິຄຳໄຊ
- ງົບປະມານ 2,796,000,000.00 ກີບ ໄລຍະ 5 ປີ (20/03/2016 ເຖິງ 20/03/2020)

II. ຕົວຊີ້ວັດໂຄງການ

1. ຕົວຊີ້ວັດ 1: ເຂດທີ່ຢູ່ໃນການປົກປັກຮັກສາຊີວະນາໆພັນ ທີ່ຖືກວັດແທກໂດຍຄະແນນປະ ສິດທິຜົນຂອງການຄຸ້ມຄອງ (ປະຈຳປີ)

2. ຕົວຊີ້ວັດ 5: ການຈັດຕັ້ງບ້ານ ທີ່ຢູ່ໃນແລະອ້ອມແອ້ມປ່າສະຫງວນ ທີ່ສະໜັບສະໜຸນໂດຍ ກປສ ທີ່ເຮັດຕາມເງື່ອນໄຂຂອງສັນຍາອະນຸລັກ (ສະສົມ)
3. ຕົວຊີ້ວັດ 1.1: ຜູ້ໄດ້ຮັບຜົນປະໂຫຍດໂດຍກົງ (ໃນນີ້ມີຍິງເທົ່າໃດ) ໂດຍວັດແທກຕາມຈຳນວນພະນັກງານທີ່ໄດ້ເຂົ້າໃນຊຸດຮຽນສຳເລັດ ກ່ຽວກັບພື້ນຖານຂອງການຄຸ້ມຄອງການຄ້າ ສັດປ່າຫຼືປ່າໄມ້

III. ຄາດຄະເນຜົນໄດ້ຮັບໂຄງການ

1. ບ້ານໄດ້ຮັບການຝຶກອົບຮົມການຄຸ້ມຄອງກອງທຶນບ້ານ, ເຕັກນິກການປູກ ຝັງລ້ຽງສັດຕ່າງໆ ທີ່ຈຳເປັນ ຈຳນວນ 90 ຄົນ ໃນນີ້ມີແມ່ຍິງຈຳນວນ 27 ຄົນ
2. ປະຊາຊົນ ໄດ້ເຂົ້າຮ່ວມທັດສະນະສຶກສາ ກ່ຽວກັບການມີສ່ວນຮ່ວມ ໃນ ການຄຸ້ມຄອງປ່າ ປ້ອງກັນ ແລະ ວຽກງານຮູບແບບການຜະລິດກະສິກຳ ທີ່ຍືນຍົງ 1 ຄັ້ງ, 45 ທ່ານຍິງ 9 ຄົນ)
3. ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ແລະມວນຊົນ ບ້ານເປົ້າ ໝາຍຂອງໂຄງການ ໃນເຂດປ່າປ້ອງກັນແຫ່ງຊາດ ນ້ຳມ່ວນ-ນ້ຳຍ້ອງ ໄດ້ຮັບຟັງການເຜີຍແຜ່ ລະບຽບ ກົດໝາຍ ໃນດ້ານການອະນຸລັກຊັບພະຍາ ກອນປ່າໄມ້ ແລະສິ່ງແວດລ້ອມ (1 ຄັ້ງ/ບ້ານ, ກົມກອງ ແລະ ໂຮງຮຽນ)
4. ສຳເລັດຂະບວນການວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ດິນປ່າໄມ້ແບບມີ ສ່ວນຮ່ວມ, ປັກ ປ້າຍ ແລະ ຫລັກໝາຍ (ດິນແຕ່ລະປະເພດ) ໃນຂອບເຂດ 9 ບ້ານ
5. ໄດ້ກົດຈະກຳປັບປຸງຊີວິດການເປັນຢູ່ຂອງຊຸມຊົນ 9 ບ້ານ ຈາກຂະບວນການ ວາງແຜນ ພັດທະນາຊີວິດການເປັນຢູ່ແບບມີສ່ວນຮ່ວມ
6. ຈະມີຜົນໄດ້ຮັບຈາກວຽກງານກວດກາລາດຕະເວນຂອງຈຸດກວດກາ ໂດຍມີບົດລາຍງານ ຜົນງານທຸກໆ 3 ເດືອນ.
7. ມີເອກະສານພາລະບົດບາດ ແລະ ລະບຽບການຂອງບ້ານ ໃນການຄຸ້ມຄອງ ທີ່ດິນ ປ່າໄມ້, ຊັບພະຍາກອນປ່າໄມ້ ແລະ ແຫລ່ງນ້ຳ ບ້ານລະ 2 ຊຸດ.
8. ໄດ້ສ້າງວັງສະຫງວນຂອງບ້ານ ຢ່າງໜ້ອຍ 1 ແຫ່ງ
9. ປະຊາຊົນໄດ້ຮັບທຶນສະໜັບສະໜຸນເຂົ້າໃນການພັດທະນາຊີວິດການເປັນຢູ່ ແບບຄົງທີ່ ຈຳນວນ 9 ບ້ານ(ກອງທຶນອະນຸລັກບ້ານ).
10. ສ້າງບ້ານອະນຸລັກໃຫ້ໄດ້ຫຼາຍກວ່າ 6 ບ້ານຂຶ້ນໄປໃນ 9 ບ້ານເປົ້າໝາຍ ໂຄງການ.
11. ຈຳນວນ 21 ບ້ານເປົ້າໝາຍໂຄງການທີ່ຜ່ານມາ (ບ້ານຂອງໂຄງການ ນ້ຳຍ້ອງຕອນເໜືອເກົ່າ 9 ບ້ານ, ບ້ານຂອງໂຄງການນ້ຳຍ້ອງຕອນໃຕ້ 12 ບ້ານ) ແລະ ບ້ານຂອງໂຄງການເຄືອຂ່າຍ ອະນຸລັກຊຸມຊົນເກົ່າ 12 ບ້ານ ໄດ້ຮັບ ການຕິດຕາມຊຸກຍູ້ເປັນປົກກະຕິ

IV. ກິດຈະກຳໂຄງການ

ອົງປະກອບ 1: ສ້າງຄວາມສາມາດໃນການຄຸ້ມຄອງປ່າປ້ອງກັນ

ກິດຈະກຳ 1.1: ຝຶກອົບຮົມກ່ຽວກັບການຄຸ້ມຄອງກອງທຶນບ້ານ(ສຳລັບປະຊາຊົນ)

ກິດຈະກຳ 1.2: ຝຶກອົບຮົມກ່ຽວກັບການປູກຝັງ (ສຳລັບປະຊາຊົນ)

ກິດຈະກຳ 1.3: ຝຶກອົບຮົມກ່ຽວກັບການລ້ຽງສັດ (ສຳລັບປະຊາຊົນ)

ກິດຈະກຳ 1.4: ໄປປະຊຸມນຳ ປກສ

ກິດຈະກຳ 1.5: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ

ກິດຈະກຳ 1.6: ທັດສະນະສຶກສາພາຍໃນ.

ກິດຈະກຳ 1.7: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນແຂວງ

ກິດຈະກຳ 1.8: ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນເມືອງ

ອົງປະກອບ 2. ສະໜັບສະໜຸນ ຄຸ້ມຄອງປ່າປ້ອງກັນແຫ່ງຊາດ

ກິດຈະກຳ 2.1: ວຽກໂຄສະນາເຜີຍແຜ່ ແລະ ປູກຈິດສຳນຶກ

ກິດຈະກຳ 2.2.: ຄຸ້ມຄອງຈັດສັນທີ່ດິນ

ກິດຈະກຳ 2.3.: ປັບປຸງຊີວິດການຢູ່ ແລະ ສ້າງກອງທຶນອະນຸລັກ

ກິດຈະກຳ 2.4: ສ້າງຈຸດກວດກາ ແລະ ການກວດກາລາດຕະເວນ

ອົງປະກອບ 3: ການຕິດຕາມບ້ານເປົ້າ ໝາຍ ໃນເຂດອ່າງໂຕ່ງນ້ຳຍ້ອງເປັນກິດຈະກຳທີ່ມີຄວາມຈຳເປັນ ທີ່ຈະຕ້ອງໄດ້ຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ເພື່ອເປັນການສືບຕໍ່ການສ້າງຄວາມເຂັ້ມແຂງໃຫ້ແກ່ບ້ານເປົ້າໝາຍໂຄງການ ທີ່ໄດ້ຜ່ານການຈັດຕັ້ງປະຕິບັດ ຈຳນວນ 21 ບ້ານ (ບ້ານຂອງໂຄງການ ນ້ຳຍ້ອງຕອນເໜືອເກົ່າ 9 ບ້ານ, ບ້ານຂອງໂຄງການນ້ຳຍ້ອງຕອນໃຕ້ 12 ບ້ານ) ແລະ ບ້ານຂອງໂຄງການເຄືອຂ່າຍອະນຸລັກຊຸມຊົນ 12 ບ້ານ ເຊິ່ງກິດຈະກຳນີ້ແມ່ນຈະໄດ້ ຈັດຕັ້ງປະຕິບັດ ໂດຍການສົມທົບ ແລະ ປະສານງານກັນລະຫວ່າງ ຜູ້ຮັບຜິດຊອບໂຄງການ ແລະ ພະນັກງານເມືອງທີ່ກ່ຽວຂ້ອງ ເພື່ອຕິດຕາມ ແລະ ຊຸກຍູ້ໃນການຈັດຕັ້ ;ປະຕິບັດ ວຽກງານອະນຸລັກ ແລະ ວຽກງານກອງທຶນບ້ານ ໂດຍຈະປະຕິບັດໃນ 2 ຄັ້ງ ຕໍ່ປີ

ອົງປະກອບ 4: ຄຸ້ມຄອງບໍລິຫານໂຄງການ

1. ສ້າງທີມຈັດຕັ້ງປະຕິບັດໂຄງການ ແລະ ສ້າງຄວາມເຂົ້າໃຈຮ່ວມກັນໃນທີມງານ
2. ຈັດຊື້ອຸປະກອນ ໂຄງການ
3. ສ້າງບົດລາຍງານປະຈຳ 6 ເດືອນ ແລະ ປີ ຊຶ່ງຈະໄດ້ສົ່ງໃຫ້ຫ້ອງການ ກປສ ແລະ ຂຶ້ນແຜນການ 6 ເດືອນ ແລະ ປີ ຕໍ່ໄປ ໂດຍອີງໃສ່ແຜນລວມ.
4. ປະສານກັບອົງການກ່ຽວຂ້ອງອື່ນໆ ກ່ຽວກັບການຄຸ້ມຄອງໂຄງການ ໂດຍສະເພາະ ກັບ ກປສ
5. ປະເມີນຜົນ.

ກິດຈະກຳທີ່ວາງແຜນໄວ້ໃນໄລຍະລາຍງານ	ຜົນໄດ້ຮັບ
ອົງປະກອບ 1 : ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງປ່າປ້ອງກັນ	
ໄປປະຊຸມນຳ ປກສ	1. ເຂົ້າຮ່ວມກອງປະຊຸມການໄປຮ່ວມກອງປະຊຸມປະຈຳປີ ແລະ ແລກປ່ຽນບົດຮຽນໂຄງການຄຸ້ມຄອງປ່າສະຫງວນ, ປ່າປ້ອງກັນ, ໂຄງການປະເມີນຜົນກະທົບສິ່ງແວດລ້ອມ-ສັງຄົມ ແລະ ໂຄງການຄຸ້ມຄອງຢາຂ້າຫຍ້າ ທີ່ແຂວງບໍ່ແກ້ວມີ 7 ຄົນ, ຍິງ 2ຄົນ. (ມີບົດລາຍງານ). 2. ເຂົ້າຮ່ວມການຝຶກອົບຮົມການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການ ຂອງ ກອງທຶນປົກປັກຮັກສາສິ່ງແວດລ້ອມ ມີ 2 ຄົນ, ຍິງ 1 ຄົນ.
ຝຶກອົບຮົມວຽກປູກຝັງ, ລ້ຽງສັດ ແລະ ກອງທຶນ ໃຫ້ບ້ານ	ສຳເລັດຝຶກອົບຮົມທາງດ້ານວິຊາການຕ່າງໆທີ່ກ່ຽວຂ້ອງຈຳນວນນຶ່ງໃຫ້ 9 ບ້ານ ມີຜູ້ເຂົ້າຮ່ວມ 264ຄົນ, ຍິງ 45 ຄົນ
ທັດສະນະສຶກສາ	ສຳເລັດມີຜູ້ເຂົ້າຮ່ວມ 23 ຄົນ, ຍິງ 5 ຄົນ
ຈັດກອງປະຊຸມປະຈຳ3ເດືອນ (7,8,9 ປີ 2017) ຂັ້ນເມືອງ	ສຳເລັດ 100%ຕາມແຜນການ ມີຜູ້ເຂົ້າຮ່ວມ 36 ຄົນ, ຍິງ 4ຄົນ.
ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນແຂວງ	ສຳເລັດ 100%ຕາມແຜນການ ມີຜູ້ເຂົ້າຮ່ວມ 36 ຄົນ, ຍິງ 6ຄົນ.
ກອງປະຊຸມສ້າງຄວາມເຂົ້າໃຈຂັ້ນບ້ານ ແລະ ຕິດຕາມ	ບໍ່ໄດ້ປະຕິບັດ
ອົງປະກອບ 2: ສະນັບສະໜຸນການຄຸ້ມຄອງປ່າປ້ອງກັນ ແລະ ການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ	

ລົງເຄື່ອນໄຫວວຽກງານວາງແຜນນຳໃຊ້ທີ່ດິນແບບມີສ່ວນຮ່ວມກັບຊຸມຊົນ ແລະ ປັກຫລັກໝາຍ	ປະຕິບັດສຳເລັດ 9 ບ້ານ 100%ສາມາດກຳນົດການນຳໃຊ້ທີ່ດິນໃຫ້ບ້ານໄດ້ 101,896ha ໃນນີ້ເນື້ອທີ່ປ່າໄມ້ມີ 64,206ha
ລົງເກັບກຳຂໍ້ມູນ ເສດຖະກິດ-ສັງຄົມ ວາງແຜນປັບປຸງຊີວິດການເປັນຢູ່ແບບມີສ່ວນຮ່ວມຂອງຊຸມຊົນ	ປະຕິບັດສຳເລັດ 9 ບ້ານ 100% ກິດຈະກຳທີ່ກຳນົດໄດ້ສ່ວນໃຫຍ່ຈະເປັນການລ້ຽງງົວ, ລ້ຽງແບ້ ມີຄອບຄົວເຂົ້າຮ່ວມກິດຈະກຳທັງໝົດ 45 ຄອບຄົວ, ສ້າງຕັ້ງຄະນະອະນຸລັກບ້ານໄດ້ 27ຄົນ, ສ້າງຕັ້ງຄະນະກອງທຶນບ້ານໄດ້49 ຄົນ
ການປ່ອຍກອງທຶນໃຫ້ແກ່ 9 ບ້ານ	ສຳເລັດການປ່ອຍກອງທຶນໃຫ້ແກ່ 9 ບ້ານໆລະ 20 ລ້ານກີບ ລວມທັງໝົດ 180 ລ້ານກີບ ເພື່ອນຳໃຊ້ແກ້ໄຂໃນວຽກງານການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ຊຶ່ງໄລຍະທຳອິດມີ 45 ຄອບຄົວເຂົ້າຮ່ວມການນຳໃຊ້ກອງທຶນດັ່ງກ່າວ
ສຳເລັດການລົງສຳຫລວດຄວາມຫລາກຫລາຍທາງດ້ານຊີວະນາໆພັນ	ສຳເລັດການລົງສຳຫລວດຄວາມຫລາກຫລາຍທາງດ້ານຊີວະນາໆພັນ • ສາມາດລວບລວມຊະນິດພືດທີ່ພົບເຫັນໃນເຂດສຳຫຼວດທັງໝົດ 453 ຊະນິດ ຂອງ 117 ຕະກຸນ • ສາມາດພົບເຫັນ ແລະ ຂຶ້ນບັນຊີສັດປ່າໃນເຂດສຳຫຼວດທັງໝົດ 85 ຊະນິດ ໃນນັ້ນປະກອບດ້ວຍ ນົກ, ແມງໄມ້, ສັດເຄິ່ງບົກ ເຄິ່ງນ້ຳ, ປາ, ສັດລ້ຽງລູກດ້ວຍນ້ຳນົມ ແລະ ສັດເລືອຄານ
ມອບພາຫະນາ ແລະ ອຸປະກອນໃຫ້ແກ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ	ສຳເລັດ 100%ຕາມແຜນການປະກອບມີ: ລົດຈັກ 3 ຄັນ, ແລປທອບ 1 ໜ່ວຍ, LCD 1ໜ່ວຍ, ປຣິນເຕີ 1 ໜ່ວຍ
ເຄື່ອງຮັບໃຊ້ພາກສະໜາມຕ່າງໆ, ປ້າຍ, ຫລັກໝາຍເຂດປ່າປ້ອງກັນ	ສຳເລັດການສ້າງປ້າຍໃຫຍ່ 9 ປ້າຍ, ປ້າຍເຂດຫ້ວງຫ້າມເດັດຂາດ ປ້າຍ ແລະ ປ້າຍເນື້ອໃນລະບຽບ ແລະ ຂໍ້ແຂ່ງຂັນອະນຸລັກບ້ານ ແຜ່ນ
ລົງຕິດປ້າຍ ແລະ ຫລັກໝາຍ	ສຳເລັດ 9 ບ້ານ 100%
ເຄື່ອນໄຫວກວດກາລາດຕະເວນຂອງຈຸດກວດກາ	ໂດຍລົງປະສານງານກັບຄະນະອະນຸລັກບ້ານເພື່ອລົງກວດກາສະກັດກັ້ນການຖາງປ່າເຮັດໄຮ່ຊະຊາຍ, ສະກັດກັ້ນການລັກລອບຕັດໄມ້ຊະຊາຍ, ສະກັດກັ້ນການເກີດໄຟລາມປ່າ, ການເກັບຈັກຕັດໄມ້ທີ່ຜິດກົດໝາຍໄດ້ 33 ໜ່ວຍ, ອາວຸດລ່າເນື້ອ(ປືນແກັບ 21 ກະບອກ).
ອົງປະກອບ 3. ການຕິດຕາມບ້ານເປົ້າໝາຍໃນເຂດອ່າງໂຕ່ງນ້ຳຍ້ອງ	
ລົງຢ້ຽມຢາມບ້ານ	ສຳເລັດການລົງຕິດຕາມບ້ານເປົ້າໝາຍໂຄງການເຊັ່ນ: 12 ບ້ານຂອງໂຄງການ CCN, 9 ບ້ານ ໂຄງການຄຸ້ມຄອງປ່າປ້ອງກັນແຫ່ງຊາດນ້ຳມ່ວນ-ນ້ຳຍ້ອງໄລຍະ 1. ❖ ທຽບໃສ່ຕາມແຜນການປີ ຂອງ ໂຄງການ ສຳເລັດໄດ້100%
ອົງປະກອບ 4. ການບໍລິຫານ ແລະ ຄຸ້ມຄອງໂຄງການ	

ຈັດພິມ ແລະ ສຳເນົາຕ່າງໆຂອງກອງປະຊຸມ	ສຳເລັດການເຮັດປຶ້ມບົດລາຍງານສະຫລຸບປີ2017 ຂອງໂຄງການ
ບຳລຸງຮັກສາຫ້ອງການຂັ້ນແຂວງ	ສຳເລັດ100%
ບຳລຸງຮັກສາຫ້ອງການຂັ້ນເມືອງ	ສຳເລັດ100%

2.3.2. ຜົນການເຄື່ອນໄຫວໄລຍະ 1ປີ ໂຄງການຕາມຄາດໝາຍ ຂອງ ແຜນ ການທີ່ກຳນົດໄວ້:

ຜົນໄດ້ຮັບຂອງໂຄງການ ທີ່ກຳນົດໄວ້ແຕ່ 2016-2020	ຄວາມຄືບໜ້າທີ່ໄດ້ຮັບໃນ ໂຄງການສົກປີ 2016-2017	ເຫດຜົນທີ່ບໍ່ສຳເລັດ
1. ບ້ານໄດ້ຮັບການຝຶກອົບຮົມການຄຸ້ມຄອງກອງທຶນບ້ານ, ເຕັກນິກການປູກ ຝັງລ້ຽງສັດຕ່າງໆທີ່ຈຳເປັນ ຈຳນວນ 90 ຄົນ ໃນນີ້ມີແມ່ຍິງຈຳນວນ 27 ຄົນ	ສຳເລັດຝຶກອົບຮົມທາງດ້ານວິຊາການຕ່າງໆທີ່ກ່ຽວຂ້ອງຈຳນວນນຶ່ງໃຫ້ 9 ບ້ານ ມີຜູ້ເຂົ້າຮ່ວມ 264ຄົນ, ຍິງ 45 ຄົນ ❖ ທຽບໃສ່ຕາມແຜນການ ຂອງ ໂຄງການ ສຳເລັດໄດ້100%	
2. ປະຊາຊົນ ໄດ້ເຂົ້າຮ່ວມທັດສະນະສຶກສາ ກ່ຽວກັບການມີສ່ວນຮ່ວມ ໃນ ການຄຸ້ມຄອງປ່າປ້ອງກັນ ແລະ ວຽກງານຮູບແບບການຜະລິດກະສິກຳ ທີ່ຍືນຍົງ 1 ຄັ້ງ, 45 ທ່ານຍິງ 9 ຄົນ)	ສຳເລັດມີຜູ້ເຂົ້າຮ່ວມ 23 ຄົນ, ຍິງ 5 ຄົນ ❖ ທຽບໃສ່ຕາມແຜນການ ຂອງ ໂຄງການ ສຳເລັດໄດ້100%ແຕ່ຜູ້ເຂົ້າຮ່ວມໄດ້ແຕ່ 51% ທຽບໃສ່ແຜນການ	
3. ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ ແລະມອນຊົນບ້ານເປົ້າ ໝາຍ'ຂອງໂຄງການ ໃນເຂດປ່າປ້ອງກັນແຫ່ງຊາດ ນ້ຳມ່ວນ-ນ້ຳຍ້ອງ ໄດ້ຮັບຟັງການເຜີຍແຜ່ ລະບຽບ ກົດໝາຍ ໃນດ້ານການອະນຸລັກຊັບພະຍາ ກອນປ່າໄມ້ ແລະ ສິ່ງແວດລ້ອມ (1 ຄັ້ງ/ບ້ານ, ກົມກອງ ແລະ ໂຮງຮຽນ)	ໄດ້ເຮັດສຳເລັດແຕ່ປີ 2016 ❖ ທຽບໃສ່ຕາມແຜນການ ຂອງ ໂຄງການ ສຳເລັດໄດ້100%	
4. ສຳເລັດຂະບວນການວາງແຜນນຳໃຊ້ທີ່ດິນກະສິກຳ ແລະ ດິນປ່າໄມ້ແບບມີ ສ່ວນຮ່ວມ, ປັກປ້າຍ ແລະ ຫລັກໝາຍ (ຕ່ນ ແຕ່ລະປະເພດ) ໃນຂອບເຂດ	ໄດ້ເຮັດສຳເລັດຂັ້ນຕອນການສຶກສາຂໍ້ມູນ ແລະ ກຳນົດການຈັດສັນການນຳໃຊ້ທີ່ດິນແບບມີສ່ວນຮ່ວມກັບ 9 ບ້ານ ແລະ ສຳເລັດການປັກປ້າຍຊີ້ບອກເຂດດິນແຕ່ລະປະເພດ. ❖ ທຽບໃສ່ຕາມແຜນການ ຂອງ ໂຄງການ	

9 ບ້ານ	ສຳເລັດໄດ້100%	
5. ໄດ້ກົດຈະກຳປັບປຸງຊີວິດການເປັນຢູ່ຂອງຊຸມຊົນ 9 ບ້ານ ຈາກຂະບວນການ ວາງແຜນພັດທະນາຊີວິດການເປັນຢູ່ແບບມີສ່ວນຮ່ວມ	ໄດ້ເຮັດສຳເລັດຂັ້ນຕອນການສຶກສາຂໍ້ມູນ ເສດຖະກິດ-ສັງຄົມແບບມີສ່ວນຮ່ວມ ກັບ 9 ບ້ານ ❖ ທຽບໃສ່ຕາມແຜນການ ຂອງ ໂຄງການ ສຳເລັດໄດ້ 100%	
6. ຈະມີຜົນໄດ້ຮັບຈາກວຽກງານກວດກາລາດຕະເວນຂອງຈຸດກວດກາ ໂດຍມີບົດລາຍງານຜົນງານທຸກໆ 3 ເດືອນ.	ໂດຍລົງປະສານງານກັບຄະນະອະນຸລັກບ້ານ ເພື່ອລົງກວດກາສະກັດກັ້ນການຖາງປ່າເຮັດໄຮ່ຊະຊາຍ, ສະກັດກັ້ນການລັກລອບຕັດໄມ້ຊະຊາຍ, ສະກັດກັ້ນການເກີດໄຟລາມປ່າ, ການເກັບຈັກຕັດໄມ້ທີ່ຜິດກົດໝາຍ, ເກັບກູ້ເຄື່ອງມື ແລະ ອາວຸດລ່າເນື້ອ ໃນແຕ່ລະບ້ານ. ❖ ທຽບໃສ່ຕາມແຜນການ ຂອງ ໂຄງການ ສຳເລັດໄດ້ 100%	
7. ມີເອກະສານພາລະບົດບາດ ແລະ ລະບຽບການຂອງບ້ານ ໃນການຄຸ້ມຄອງ ທີ່ດິນ ປ່າໄມ້ , ຊັບພະຍາກອນປ່າໄມ້ ແລະ ແຫລ່ງນ້ຳ ບ້ານລະ 2 ຊຸດ.	ໄດ້ເຮັດສຳເລັດແລ້ວ 9 ບ້ານ ❖ ທຽບໃສ່ຕາມແຜນການ ຂອງ ໂຄງການ ສຳເລັດໄດ້ 100%	
8. ໄດ້ສ້າງວັງສະຫງວນຂອງບ້ານ ຢ່າງໜ້ອຍ 1 ແຫ່ງ	ໄດ້ສ້າງວັງສະຫງວນປ່າໄດ້ ຢູ່ນ້ຳຍະລາ ບ້ານພຽງດີ 1 ແຫ່ງ, ບ້ານສົບຄີ 3 ແຫ່ງ ສ້າງໃນປີ2016. ❖ ທຽບໃສ່ຕາມແຜນການ ຂອງ ໂຄງການ ສຳເລັດໄດ້ 100%	
9. ປະຊາຊົນໄດ້ຮັບທຶນສະໜັບສະໜຸນເຂົ້າໃນການພັດທະນາຊີວິດການເປັນຢູ່ ແບບຄົງທີ່ ຈຳນວນ 9 ບ້ານ(ກອງທຶນອະນຸລັກບ້ານ).	ສຳເລັດການປ່ອຍກອງທຶນໃຫ້ແກ່ 9 ບ້ານໆ ລະ 20 ລ້ານກີບ ລວມທັງໝົດ 180 ລ້ານກີບ ເພື່ອນຳໃຊ້ແກ້ໄຂໃນວຽກງານການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ຊຶ່ງໄລຍະທຳອິດມີ 45 ຄອບຄົວເຂົ້າຮ່ວມການນຳໃຊ້ກອງທຶນດັ່ງກ່າວ ❖ ທຽບໃສ່ຕາມແຜນການ ຂອງ ໂຄງການ ສຳເລັດໄດ້ 100%	

2.4. ສະພາບຂອງກົນໄກການຈັດຕັ້ງ

ໂຄງການນີ້ ມີຄະນະຊີ້ນຳໂຄງການຂັ້ນແຂວງ ໂດຍແມ່ນຄະນະກຳມະການຄຸ້ມຄອງໂຄງການອ່າງໂຕ່ງນ້ຳຍ້ອງຕອນໃຕ້ ຮັບຜິດຊອບຕິດຕາມ (ຕາມແຈ້ງການຫ້ອງວ່າການປົກຄອງແຂວງບໍລິຄຳໄຊ ສະບັບເລກທີ 055/ຫກ.ຂບຊ, ລົງວັນທີ 20 ມັງກອນ 2014) ຄະນະດັ່ງກ່າວປະກອບດ້ວຍ ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມແຂວງ, ຮອງພະແນກກະສິກຳ ແລະ ປ່າໄມ້, ຮອງພະແນກແຜນການ-ການລົງທຶນ, ຮອງເຈົ້າເມືອງຄຳເກີດ, ຮອງເຈົ້າເມືອງວຽງທອງ ແລະ ຮອງເຈົ້າເມືອງໄຊຈຳພອນ ແລະ ຜູ້ຕາງໜ້າຈາກກົມຄຸ້ມຄອງຊັບພະຍາກອນປ່າໄມ້.

ເບື້ອງຕົ້ນແມ່ນພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແຂວງບໍລິຄຳໄຊ ໄດ້ເປັນຜູ້ຮັບຜິດຊອບໃນການຈັດຕັ້ງປະຕິບັດວຽກງານ ແຕ່ໃນປະຈຸບັນແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງບໍລິຄຳໄຊ ໂດຍສົມທົບແລະມີສ່ວນຮ່ວມຈາກຫ້ອງການທີ່ກ່ຽວຂ້ອງເມືອງ ຕາມຂັ້ນຕອນ ແລະ ແຜນການ ທີ່ຜູ້ໃຫ້ທຶນໄດ້ວາງໄວ້.

ການເຄື່ອນໄຫວວຽກງານໂຄງການໄລຍະທີ 2 ນັບແຕ່ເລີ່ມຕົ້ນມາເຖິງປະຈຸບັນແມ່ນທ່ານ ມະນີແສງ ເພັດ ພະຄຸນທອງ ເປັນຫົວໜ້າໂຄງການ ແລະ ມີການປ່ຽນຜູ້ຮັບຜິດຊອບການເງິນໂຄງການ ຈາກ ນາງ ກອງ ແກ້ວ ສຸວັນນະລາດ ມາເປັນ ນາງ ມາລາພອນ ຕາມສະບັດ(ຕາມຂໍ້ຕົກລົງສະບັບເລກທີ 280/ຈມ.ມຊພ, ລົງ ວັນທີ 08/10/2016ເຊິ່ງປ່ຽນຈາກຂໍ້ຕົກລົງສະບັບເລກທີ 1809/ພຊສ.ບຊ, ລົງວັນທີ 27/06/2013)

(ເອກະສານຊ້ອນທ້າຍ 1)

ການປະສານງານວຽກງານໂຄງການກັບທ້ອງຖິ່ນ (ເມືອງ) ແມ່ນໄດ້ມີຄະນະປະສານງານຂັ້ນເມືອງ ໂດຍແມ່ນທ່ານຮອງເຈົ້າເມືອງເປັນຫົວໜ້າຄະນະ ແລະ ພະນັກງານຈາກຫ້ອງການຕ່າງໆທີ່ກ່ຽວຂ້ອງຂັ້ນເມືອງເປັນຄະນະ ແລະ ສະມາຊິກ (ມີຂໍ້ຕົກ ລົງຈາກທ່ານເຈົ້າເມືອງສະບັບເລກທີ 280/ຈມ.ມຊພ, ລົງວັນທີ 08/11/2016).

(ເອກະສານຊ້ອນທ້າຍ 2)

ການຮ່ວມປະຕິບັດງານໂຄງການຢູ່ຂັ້ນບ້ານ ແມ່ນໄດ້ມີການປະສານງານກັບອຳນາດການປົກຄອງບ້ານ ພ້ອມດ້ວຍປະຊາຊົນພາຍໃນບ້ານ.

2.5. ສະພາບການຈັດຕັ້ງປະຕິບັດກິດຈະກຳ ແລະ ຜົນສຳເລັດຂອງໂຄງການ

2.5.1. ລົງໂຄສະນາຕໍ່ອຈິງ.

ທີມງານໂຄສະນາ ທີ່ໂຄງການໄດ້ສ້າງຂຶ້ນ ໄດ້ນຳເອົາຄວາມຮູ້ດ້ານຄວາມສຳຄັນ ຂອງການອະນຸລັກ (ຄຸນປະໂຫຍດ ຂອງຊີວະນາໆພັນທີ່ມີຕໍ່ການດຳລົງຊີວິດຂອງ ປະຊາຊົນ, ລະບຽບກົດໝາຍທີ່ກ່ຽວຂ້ອງ), ເນື້ອໃນຂອງການໂຄສະນາເຜີຍແຜ່ ສ່ວນໃຫຍ່ ແມ່ນເນັ້ນໃສ່ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສັດນ້ຳ - ສັດປ່າ, ຊຶ່ງປະກອບດ້ວຍພະນັກງານແຂວງ 3 ຄົນ, ພະນັກງານເມືອງ 8 ຄົນ ໄດ້ລົງຈັດຕັ້ງການເຜີຍແຜ່ ໃນແຕ່ລະບ້ານເປົ້າໝາຍ 9 ບ້ານ, ແລະ ໃຊ້ເວລາບ້ານລະ 2 ວັນ. ເຊິ່ງມີປະຊາຊົນ, ຄູອາຈານ ແລະ ນັກຮຽນເຂົ້າຮ່ວມ 1,032 ຄົນ, ຍິງ 394 ຄົນ ວິທີການ ມີການເຜີຍແຜ່ເອກກະສານທີ່ໂຄງການສ້າງຂຶ້ນ, ປຶກສາຫາລືກັນ, ຄຳຖາມຄຳຕອບ, ການແຈກສິ່ງ ພິມທີ່ໄດ້ກຽມມາ, ການສະແດງລະຄອນ, ຂັບລຳ. ກິດຈະກຳດັ່ງກ່າວ ໄດ້ຮັບຄວາມສົນໃຈຈາກປະຊາຊົນ ແລະ ໄດ້ຮັບການຕອບຮັບທີ່ດີຈາກປະຊາຊົນທຸກບ້ານ, ອັນເຮັດໃຫ້ເຂົາເຈົ້າມີຄວາມເຂົ້າໃຈກ່ຽວກັບຄວາມສຳຄັນຂອງການອະນຸລັກ, ຫັນປ່ຽນພຶດຕິກຳທີ່ເມີນເສີຍຫຼືແຕະຕ້ອງຕ່ຳ ຊີວະ ນາໆພັນ ມາສູ່ຄວາມເປັນເຈົ້າການໃນການອະນຸລັກຢູ່ແຕ່ລະບ້ານ (ກິດຈະກຳນີ້ໄດ້ປະຕິບັດໃນປີ 2016).

2.5.2. ກິດຈະກຳເກັບກຳຂໍ້ມູນເສດຖະກິດ-ສັງຄົມແບບມີສ່ວນຮ່ວມຂອງຊຸມຊົນ

ກິດຈະກຳນີ້ທີມງານດັ່ງກ່າວໄດ້ນຳພາ ແລະ ລະດົມແນວຄິດ ອຳນາດການປົກຄອງບ້ານ, ປະຊາຊົນພາຍໃນບ້ານ ໃນການຄົ້ນຫາກິດຈະກຳໃນການສົ່ງເສີມຜະລິດກະສິກຳເພື່ອສ້າງລາຍຮັບໃຫ້ຄອບຄົວໄດ້ປັບປຸງຊີວິດການເປັນຢູ່ຂອງຄອບຄົວ ໂດຍສະເພາະຄອບຄົວທີ່ຍັງບໍ່ທັນພົ້ນທຸກ ແບບມີສ່ວນຮ່ວມຕາມສະພາບຄວາມເປັນຈິງ ແລະ ທ່າແຮງຂອງບ້ານໃນການສົ່ງເສີມການຜະລິດກະສິກຳໃຫ້ພຽງພໍດ້ານສະບຽງອາຫານ ແລະ ໃຫ້ກາຍເປັນສິນຄ້າ ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວປ່ຽນແທນຈາກການຖາງປ່າເຮັດໄຮ່ແບບເລື່ອນລອຍມາສູ່ອາຊີບຄົງທີ່ເທື່ອລະກ້າວ ມາຮ່ວມມືກັບ ລັດ ໃນການຄຸ້ມຄອງປົກປັກຮັກສາປ່າໄມ້ໃນຂອບເຂດບ້ານ ສະນັ້ນມາເຖິງປະຈຸບັນ ສາມາດປະຕິບັດສຳເລັດ 9 ບ້ານໃນເມືອງໄຊຈຳພອນ, ໃນການກຳນົດກິດຈະກຳປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແຕ່ລະບ້ານນັ້ນແມ່ນໄດ້ກຳນົດຕາມສະພາບຄວາມເໝາະສົມຂອງທ່າແຮງ ແລະຄວາມຕ້ອງການຂອງປະຊາຊົນ ແຕ່ຕ້ອງມີຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງ ແລະ ເໝາະສົມກັບເງິນກອງທຶນທີ່ໄດ້ຕອບສະໜອງໃຫ້ແກ່ບ້ານ.

ໃນການດຳເນີນກິດຈະກຳນີ້ ໂຄງການໄດ້ນຳ ໃຊ້ພະນັກງານວິຊາການຈາກພາກສ່ວນທີ່ກ່ຽວຂ້ອງ ຊຶ່ງປະກອບດ້ວຍພະນັກງານແຂວງ 3 ຄົນ, ພະນັກງານເມືອງ 5 ຄົນ ໃນໄລຍະ 5 ວັນ/ບ້ານ. ກິດຈະກຳທີ່ເປັນເປົ້າໝາຍ ແມ່ນຂົງເຂດກະສິກຳ. ກິດຈະກຳທີ່ບ້ານໄດ້ຄັດເລືອກ ມີ: ການປູກເຂົ້າ, ການປູກພືດໄລຍະສັ້ນ, ການລ້ຽງສັດນ້ອຍ ແລະ ສັດໃຫຍ່ ຕາມເງື່ອນໄຂຕົວຈິງຂອງບ້ານ ຊຶ່ງປະຊາຊົນສາມາດດຳເນີນການຈັດຕັ້ງປະຕິບັດໄດ້ ແລະ ເຫັນວ່າມີຜົນປະໂຫຍດໂດຍກົງໃຫ້ແກ່ຊຸມຊົນ, ກິດຈະກຳທີ່ກຳນົດໄດ້ສ່ວນໃຫຍ່ຈະເປັນການລ້ຽງງົວ, ລ້ຽງແບ້ ມີຄອບຄົວເຂົ້າຮ່ວມກິດຈະກຳທັງໝົດ 45 ຄອບຄົວ, ສ້າງຕັ້ງຄະນະອະນຸລັກບ້ານໄດ້ 27ຄົນ.

2.5.3. ກິດຈະກຳວາງແຜນຈັດສັນ, ຄຸ້ມຄອງ ແລະ ນຳໃຊ້ທີ່ດິນ

ກິດຈະກຳນີ້ ເປັນຂໍ້ມູນພື້ນຖານ ໃຫ້ການກຳນົດແຜນພັດທະນາຂອງບ້ານ. ເຊິ່ງການເຄື່ອນໄຫວວຽກງານນີ້ໄດ້ນຳໃຊ້ພະນັກງານວິຊາການຈາກພາກສ່ວນທີ່ກ່ຽວຂ້ອງຊຶ່ງປະກອບດ້ວຍພະນັກງານແຂວງ 4 ຄົນ, ພະນັກງານເມືອງ 4 ຄົນ ໃນໄລຍະ 5 ວັນ/ບ້ານ.

ກິດຈະກຳ ໄດ້ດຳເນີນໄປຕາມສະພາບຄວາມເປັນຈິງ ໃນການນຳໃຊ້ທີ່ດິນ ແລະ ຂໍ້ມູນຈາກຜົນການແບ່ງດິນ - ແບ່ງປ່າທີ່ມີແລ້ວ ຂອງບ້ານ ໂດຍມີການສຳຫຼວດຂໍ້ມູນ ສະພາບເນື້ອທີ່ດິນແຕ່ລະປະເພດດິນ, ເປີດກອງປະຊຸມຮ່ວມກັບຊາວບ້ານ ເພື່ອພ້ອມກັນທົບທວນຄືນ ຕໍ່ສະພາບຄວາມເປັນຈິງ ໃນການຄຸ້ມຄອງນຳໃຊ້ທີ່ດິນແຕ່ລະປະເພດມາຈົນເຖິງປະຈຸບັນ ແລ້ວພ້ອມກັນກຳນົດຄືນໃໝ່ເພື່ອໃຫ້ແທດເໝາະ ກັບຄວາມຕ້ອງການໃນຄວາມເປັນຈິງໃນປະຈຸບັນແລະໃນອະນາຄົດ ດ້ວຍການສ້າງເປັນແຜນທີ່ການກຳນົດທີ່ດິນແຕ່ລະປະເພດ ຂອງ ແຕ່ລະບ້ານ 9 ບ້ານ ມີເນື້ອທີ່ທັງໝົດ 101,896ha ໃນນີ້ເນື້ອທີ່ປ່າໄມ້ມີ 64,206ha (ເຊິ່ງລວມທັງເຂດທີ່ເປັນປ່າໄມ້ແລ້ວ ແລະ ເຂດທີ່ຈະຟື້ນຟູໃຫ້ເປັນປ່າແບບທຳມະຊາດ), ສ້າງລະບຽບໃນການຄຸ້ມຄອງທີ່ດິນ, ສ້າງປ້າຍພ້ອມທັງ ຕິດປ້າຍເພື່ອຊີ້ບອກເຂດດິນແຕ່ລະປະເພດ ໃຫ້ບ້ານ.

ຜົນໃນການຈັດຕັ້ງປະຕິບັດເຫັນໄດ້ວ່າ ບ້ານມີຄວາມເຂົ້າໃຈດີຂຶ້ນ ກ່ຽວກັບສະພາບການນຳໃຊ້ທີ່ດິນໃນປະຈຸບັນ ລວມທັງ ເຂດທີ່ອະນຸຍາດໃຫ້ນຳໃຊ້ໄດ້ ແລະ ເຂດອະນຸລັກໄວ້ ບັນຫາການຂັດແຍ່ງການນຳໃຊ້ທີ່ດິນພາຍໃນບ້ານ ແລະ ບ້ານອ້ອມຂ້າງຖືກແກ້ໄຂ, ເປັນຂໍ້ມູນພື້ນຖານທີ່ດີໃຫ້ແກ່ການວາງແຜນພັດທະນາຂອງບ້ານໃນປະຈຸບັນ ແລະ ອະນາຄົດ.

2.6. ການຄຸ້ມຄອງບໍລິຫານໂຄງການ

2.6.1. ປັບປຸງຫ້ອງການ ແລະ ອຸປະກອນຕ່າງໆ

ໂຄງການໄດ້ປະກອບສິ່ງອຳນວຍຄວາມສະດວກຕ່າງໆໃຫ້ແກ່ການຈັດຕັ້ງປະຕິບັດກິດຈະກຳຂອງໂຄງການ ຢູ່ແຂວງ ແລະ ເມືອງ ຊຶ່ງມີລາຍລະອຽດດັ່ງນີ້:

1). ຫ້ອງການຢູ່ແຂວງ:

- ລົດກະບະ 1 ຄັນ, (FORD RANGER Double Cab 4WDXL)

2). ຫ້ອງການຢູ່ເມືອງ:

- ລົດກະບະ 1 ຄັນ, (FORD RANGER Double Cab 4WDXL) ລົດໂຄງການໄລຍະ1
- ລົດຈັດ 3 ຄັນ
- ອຸປະກອນຮັບໃຊ້ຫ້ອງການ: ຄອມພິວເຕີໂນດບຸກ 2 ໜ່ວຍ; ເຄື່ອງພິມ 1 ເຄື່ອງ, ເຄື່ອງສາຍ LCD 1 ເຄື່ອງ.

2.6.2. ຈັດກອງປະຊຸມ:

ສຳເລັດກອງກອງປະຊຸມປະຈຳ 3 ເດືອນ 1 ຄັ້ງ ແລະ ເຂົ້າຮ່ວມກອງປະຊຸມຖອດຖອນບົດຮຽນນຳ ກປສ 1 ຄັ້ງ.

2.4.3.3. ການຈັດຊື້-ຈັດຈ້າງ.

ໂຄງການ ໄດ້ໃຫ້ຄວາມສຳຄັນໃນການຈັດຊື້-ຈັດຈ້າງ ເພາະວ່າເພື່ອໃຫ້ມີຄວາມ ສອດຄ່ອງ ແລະ ຖືກຕ້ອງຕາມລະບຽບ ຂອງ ວຽກງານການເງິນ ແລະ ຖືກກັບລະບຽບ ຂອງ ຜູ້ໃຫ້ທຶນ ສະນັ້ນການຈັດຊື້-ຈັດຈ້າງ ສ່ວນຫລາຍ ແມ່ນໂຄງການໄດ້ສົມທົບກັບທາງ ກປສ ໂດຍກົງ ເປັນຕົ້ນການຈັດຊື້ ລົດກະບະ, ລົດຈັກ, ເຄື່ອງຮັບໃຊ້ຫ້ອງການ, ການປະມູນການກໍ່ສ້າງ ແລະ ການສ້ອງແປງຫ້ອງການຢູ່ຂັ້ນເມືອງ ແລະ ນອກນີ້ ຍັງໄດ້ ຈັ້ດຊື້-ຈັດຈ້າງ ການຜະລິດອຸປະກອນທີ່ໃຊ້ແທນເປັນສື່ໃນການໂຄສະນາ (ສຳລັບໃນປີ 2016) ຕື່ມອີກເຊັ່ນ: ເສື້ອຢືດ 250 ຜືນ, ຜ້າກັນເປື້ອນ 250 ຜືນ, ປ້ານຊະນິດສັດປ່າ 10 ປ້າຍ, ແຜ່ນປ້າຍປະກອບໂຄສະນາ 2x3 ແມັດ 8 ປ້າຍ, ປ້າຍອະນຸລັກ 3x4 ແມັດ 12 ປ້າຍ, ສຳລັບໃນປີ 2017 ຜະລິດປ້າຍ ຂະໜາດ 1.5.ແມັດx 2.00 ແມັດ ຈຳນວນ 9 ປ້າຍ, ປ້າຍເຂດຫວງຫ້າມເດັດຂາດ ຂະໜາດ 0.4 ແມັດx 0.4 ແມັດ ຈຳນວນ 180 ປ້າຍ, ແຜ່ນປ້າຍເນື້ອໃນລະບຽບ ແລະ ຂໍ້ແຂ່ງຂັນບ້ານ ຈຳນວນ 36 ແຜ່ນ, ຈັດຊື້-ຈັດຈ້າງອຸປະກອນໄຟຟ້າ ປັບປຸງຫ້ອງການພາກສະໜາມຢູ່ເມືອງໄຊຈຳພອນ.

2.4.3.4. ການນຳໃຊ້ງົບປະມານຂອງໂຄງການ

ງົບປະມານທັງໝົດ (ທີເຊັນສັນຍາ):	2,796,000,000 ກີບ.
ເງິນທີ່ໄດ້ຮັບທັງໝົດ:	1,529,134,500 ກີບ.
ກປສ ຈ່າຍໂດຍກົງ	535,825,990 ກີບ.
ເງິນທີ່ໄດ້ສະຫຼຸບ:	1,971,843,990 ກີບ.
ເງິນທີ່ຍັງບໍ່ໄດ້ສະຫຼຸບ(ເງິນຈ່າຍລ່ວງໜ້າ):	85,255,000 ກີບ.
ເງິນທີ່ຂໍຄ່ຽນໃນງວດຕໍ່ໄປ:	167,955,000 ກີບ.
ມື້ສິ້ງປົດລາຍງານການເງິນສຸດທ້າຍ:	7 ພະຈິກ 2017.

- ❖ ຂໍສະເໜີສະເພາະວຽກການເງິນ: ຂໍດັດແກ້ງົບປະມານ ສົກປີ 2017-2020 ສະເໜີຂໍຍ້າຍກິດຈະ ກຳ C2.03; C4.09 ແລະ ເງິນເຮສຸກເສີນ 10%

2.6. ບັນຫາທີ່ໄດ້ພົບໃນການຈັດຕັ້ງປະຕິບັດໂຄງການ

ບັນຫາທີ່ພົບ	ມາດຕະການທີ່ໃຊ້ເພື່ອແກ້ບັນຫາ
ບໍ່ມີ	

III. ສະຫຼຸບ

ດ້ານດີ

1). ຄະນະຊີ້ນຳໂຄງການຂັ້ນແຂວງ, ຂັ້ນເມືອງ ເອົາໃຈໃສ່ ຊີ້ນຳຢ່າງໃກ້ສິດ.

2). ພະນັກງານໃນທີມງານຂອງໂຄງການຂັ້ນເມືອງເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນຕໍ່ວຽກງານໂຄງການ.

3). ກຸ່ມບ້ານ, ອຳນາດການປົກຄອງບ້ານ ແລະ ປະຊາຊົນໃຫ້ຄວາມຮ່ວມມື ແລະຈິງໃຈຕໍ່ວຽກງານຂອງ ໂຄງການ.

ດ້ານອ່ອນ

ບໍ່ມີ

ວິທີການແກ້ໄຂ

ບໍ່ມີ

ບໍລິຄຳໄຊ, ວັນທີ 13 NOV 2017

ຫົວໜ້າພະແນກ
ກະສິກຳ ແລະ ປ່າໄມ້ ແຂວງບໍລິຄຳໄຊ

ພອນສະຫວັນ ຫອມນະບຸນລັດ
Mr Phonsavanh HOMNABOUNLATH

ຫົວໜ້າໂຄງການ